ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 1278 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 16 ມິຖຸນາ 2021.

# ໜັງສືແຈ້ງເຊີນປະມູນ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019;
- ອີງຕາມ ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບສຳລັບ ວ່າຈ້າງຊ່ຽວຊານ ແລະ ຈັດຊື້ອຸປະກອນລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຄວາມປອດໄພ ຮັບໃຊ້ລະບົບຄຸ້ມຄອງງົບປະມານແຫ່ງລັດ (GFIS) ໄລຍະ2 ສະບັບເລກທີ 0894/ກງ, ລົງວັນທີ 5 ພຶດສະພາ 2021;
- ອີງຕາມ ໜັງສືສະເໜີຂອງສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ສະບັບເລກທີ 0263/ສພຂງ, ລົງວັນທີ 16 ມິຖຸນາ 2021.

**ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈ ປະມູນຈັດຊື້-ຈັດຈ້າງ ຊາບວ່າ:**

1. ຫ້ອງການກະຊວງການເງິນ ໄດ້ຮັບອະນຸມັດໃຫ້ນຳໃຊ້ງົບປະມານປະຈຳປີ 2021 ບ້ວງທຶນເປັນທຶນສະໄໝ ເພື່ອດຳເນີນການຈັດຊື້ອຸປະກອນເຄືອຂ່າຍ ແລະ ລະບົບຄຸ້ມຄອງຕິດຕາມເຄືອຂ່າຍ, ຄວາມປອດໄພ ຂອງກະຊວງການເງິນ ດ້ວຍຮູບແບບການປະມູນເປີດກວ້າງພາຍໃນ;
2. ການປະມູນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນ, ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈ ເຂົ້າຮ່ວມການປະມູນ ຕ້ອງມີໃບອະນຸຍາດດຳເນີນທຸລະກິດທາງດ້ານໂທລະຄົມມະນາຄົມ ກ່ຽວກັບການຈຳໜ່າຍ ແລະ ຕິດຕັ້ງອຸປະກອນໄອທີ ທີ່ຖືກຕ້ອງຕາມກົດຫມາຍຂອງ ສປປ ລາວ, ມີໃບຢັ້ງຢືນການມອບພັນທະອາກອນປະຈຳປີ 2020, ຖ້າບໍ່ມີ ໃຫ້ພິມໃບແຈ້ງມອບອາກອນ ແລະ ໃບຮັບເງິນຂອງຄັງເງິນທີ່ໄດ້ມອບທຸກຄັ້ງ ໃນປີ 2020 ມາແທນ;
4. ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈສາມາດຊື້ຊອງປະມູນໄດ້ທີ່ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ກະຊວງການເງິນ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 021 417766, ຂາຍຊອງປະມູນ 1.500.000ກີບ, ເລີ່ມແຕ່ວັນທີ 17 ມິຖຸນາ 2021 ຫາ 07 ກໍລະກົດ 2021, ຊອງປະມູນຕ້ອງສົ່ງກ່ອນເວລາ 13:30 ໂມງ ແລະ ຈະໄດ້ເປີດຊອງປະມູນໃນເວລາ 13:45 ໂມງ ຂອງວັນດຽວກັນ ທີ່ຫ້ອງປະຊຸມຊັ້ນ 3 (ຕໍ່ໜ້າລິບ ຕຶກຫ້ອງການກະຊວງການເງິນ) ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງບໍລິສັດ/ວິສາຫະກິດ ທີ່ໄດ້ຍື່ນຊອງປະມູນ, ຖ້າສົ່ງກາຍກຳນົດເວລາຈະບໍ່ຮັບພິຈາລະນາ;
5. ສຳລັບເງື່ອນໄຂ, ຄຳແນະນຳ, ແບບຟອມການປະມູນ ແລະ ເອກະສານເຕັກນິກ ໄດ້ຄັດຕິດຊ້ອນທ້າຍມາພ້ອມນີ້;
6. ບໍລິສັດ/ວິສາຫະກິດ ຕ້ອງປະກອບເອກະສານຕາມແບບຟອມແນະນຳ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ໃຫ້ຄົບຖ້ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນ.

ຫົວໜ້າຫ້ອງການກະຊວງ

ກະຊວງການເງິນ ຫ້ອງການ

ສົມບູນ ອິນທະປັດຖາ